ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 21 ຫາ 25 ສິງຫາ 2023



## 4 ແຜນງານໃຫຍ່ຂອງຂະແໜງການກະສິກຳ ແລະ ປ່າໄມ້

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້

# 4 ແຜນງານໃຫຍ່ຂອງຂະແໜງການກະສິກຳ ແລະ ປ່າໄມ້



## ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025)

ແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ ຄັ້ງທີ IX (2021-2025) ເປັນເອກະສານບ່ອນອີງສຳຄັນໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ເພື່ອສ້າງບາດ ລ້ຽວໃໝ່ໃຫ້ແກ່ການຫັນປ່ຽນໂຄງປະກອບເສດຖະກິດ ຈາກການຜະລິດກະສິກຳແບບດັ້ງເດີມ ໄປສູ່ໂຄງສ້າງການຜະລິດ ກະສິກຳ-ອຸດສາຫະກຳ ແລະ ທັນສະໄໝ ມີຄຸນນະພາບ, ສົມດຸນ ແລະ ຍືນຍົງ. ແຜນດັ່ງກ່າວໄດ້ກຳນົດທິດທາງຄາດໝາຍລວມ ແລະ ວຽກງານຈຸດສຸມ ຂອງຂະແໜງການແນ່ໃສ່ໃຫ້ບັນດາແຂວງ, ນະຄອນຫຼວງໃນຂອບເຂດທົ່ວປະເທດ ມີຄວາມເປັນເອກະພາບ ແລະ ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະ ນາຊົນນະບົດ ຂອງແຂວງ, ນະຄອນຫຼວງ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຂຶ້ນໄປເລື້ອຍໆ.

ເພື່ອໃຫ້ມີຄວາມສອດຄ່ອງໃນການຈັດຕັ້ງຜັນຂະຫຍາຍຕາມ 6 ເປົ້າໝາຍໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ຂອງລັດຖະບານ, ຂະແໜງ ກະສິກຳ, ປ່າໄມ້ ໄດ້ສຸມໃສ່ 3 ຂົງເຂດ ເປັນຕົ້ນແມ່ນ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ໂດຍມີ 4 ແຜນງານຄື:

1.ແຜນງານຄ້ຳປະກັນສະບຽງອາຫານ:

ເປັນການກຳນົດໂຄງປະກອບການຜະລິດ ກະສິກຳ ໃນດ້ານການປູກຝັງ ແລະ ລ້ຽງສັດ ເປັນຕົ້ນ ເຂົ້າ, ພືດສະບຽງ, ພືດສິນຄ້າ, ສັດລ້ຽງ ແລະ ປາ, ມີແຜນການ ແລະ ມາດຕະການ ດຸ່ນດ່ຽງການຜະລິດ ແລະ ການບໍລິໂພກແນ່ໃສ່ຮັບປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ ແລະ ມີ ສິນຄ້າກະສິກຳທີ່ສະອາດ, ປອດໄພ ຈໍລະຈອນພາຍໃນຮັບປະກັນດ້ານໂພຊະນາການຂອງປະຊາຊົນໃຫ້ໄດ້ຮັບພະລັງງານ ບໍ່ຕ່ຳກວ່າ 2.600 ກິໂລກາຣໍລີຕໍ່ຄົນຕໍ່

ວັນ ໃນນີ້ ເຂົ້າ ແລະ ທາດແປ້ງ ກວມປະມານ 54 ສ່ວນຮ້ອຍ, ຊີ້ນ, ໄຂ່ ແລະ ປາ ປະມານ 13 ສ່ວນຮ້ອຍ, ປະເພດພືດຜັກ, ໝາກໄມ້ ແລະ ປະເພດຖົ່ວ ກວມປະມານ 8 ສ່ວນຮ້ອຍ ແລະ ປະເພດ ໄຂມັນ/ນໍ້າມັນ, ນໍ້າ ຕານ ແລະ ນໍ້ານົມ ກວມປະມານ 25 ສ່ວນຮ້ອຍ ໂດຍຕ້ອງຮັບປະກັນດ້ານສະບຽງອາຫານແຕ່ລະປະເພດ ເພື່ອບໍລິໂພກໃນແຕ່ລະປີໃຫ້ໄດ້ຢ່າງໜ້ອຍ ຄືດັ່ງນີ້: ເຂົ້າສານ 140 ກິໂລ/ຄົນ/ປີ, ທາດແປ້ງ 4,5 ກິໂລ/ຄົນ/ປີ, ປະເພດຊີ້ນ, ປາ ແລະ ໄຂ່ 79 ກິໂລ/ຄົນ/ປີ, ໃນນີ້ເປັນຊີ້ນໝູ 18 ກິໂລ/ຄົນຕໍ່ປີ, ຊີ້ນສັດປີກ 10 ກິໂລ/ຄົນ/ປີ, ຊີ້ນອື່ນໆ 10 ກິໂລ/ຄົນ/ປີ, ໄຂ່ 8 ກິໂລ/ຄົນ/ປີ ແລະ ປາ 33 ກິໂລ/ຄົນຕໍ່ປີ, ພືດຜັກ 80 ກິໂລ/ຄົນຕໍ່ປີ, ປະເພດຖົ່ວງາ (ແຫ້ງ) 2 ກິໂລ/ຄົນ/ປີ, ສາລີ 2 ກິໂລ/ຄົນ/ປີ, ປະເພດພືດເປັນຫົວ (ເຜືອກ, ມັນຕ່າງໆ) 2,1 ກິໂລ/ຄົນ/ປີ, ໝາກໄມ້ 40 ກິໂລ/ຄົນ/ປີ, ນໍ້າຕານ 1,5 ກິໂລ/ຄົນຕໍ່ປີ, ນໍ້ານົມ 5 ກິໂລ/ຄົນ/ປີ, ປະເພດໄຂມັນ/ນໍ້າມັນ 25 ກິໂລ/ຄົນ/ປີ.

2. ແຜນງານຜະລິດກະສິກຳເປັນສິນຄ້າ:

ມີການຈັດຕັ້ງການຜະລິດ ເປັນກຸ່ມ-ສະຫະກອນ, ເປັນຟາມແບບຫົວໜ່ວຍ MSMEs ມີນະໂຍບາຍສົ່ງເສີມການຜະລິດ, ການປຸງແຕ່ງ ຍົກມູນຄ່າ ແລະ ຄຸນນະພາບ ຂອງຜະລິດຕະພັນ, ການເຂົ້າເຖິງສິນເຊື່ອ ແລະ ຕະຫຼາດ, ການຂົນສົ່ງ ຈໍລະຈອນ ພ້ອມທັງມີມາດຕະການຊ່ວຍໜູນເພື່ອຫຼຸດຜ່ອນຜົນກະທົບຈາກໄພພິບັດ. ພ້ອມກັນນັ້ນ ກໍມີແຜນການ ແລະ ມາດຕະການ ຄຸ້ມຄອງ ພັດທະນາທີ່ດິນກະສິກຳ, ການພັດທະນາຊົນລະກະເສດ, ມີການຄົ້ນຄວ້າທົດລອງທາງວິທະຍາສາດ ດ້ານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ. ພ້ອມທັງມີກົນໄກປະສານສົມທົບກັບກະຊວງທີ່ກ່ຽວຂ້ອງຢ່າງໜັກແໜ້ນ.

3. ແຜນງານຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້:

ສູ້ຊົນເຮັດໃຫ້ທີ່ດິນປ່າໄມ້ ກວມເອົາ 70 ສ່ວນຮ້ອຍ ຂອງເນື້ອທີ່ທົ່ວປະເທດ, ຍົກລະດັບຄວາມປົກຫຸ້ມຂອງປ່າໄມ້ ບໍ່ໃຫ້ຫຼຸດ 70 ສ່ວນຮ້ອຍ ຂອງເນື້ອທີ່ທົ່ວປະເທດ, ຍົກລະດັບປ່າສະຫງວນແຫ່ງຊາດ ຂຶ້ນເປັນອຸທິຍານແຫ່ງຊາດ ໃຫ້ໄດ້ 5 ແຫ່ງ, ຟື້ນຟູປ່າ 1,8 ລ້ານເຮັກຕາ ແລະ ປູກໄມ້ ເພື່ອເປັນສິນ ຄ້າ ໃຫ້ໄດ້ທັງໝົດ 200.000 ເຮັກຕາ, ເພື່ອເປັນເງື່ອນໄຂຄໍ້າປະກັນການສະໜອງວັດຖຸດິບປ້ອນໂຮງງານອຸດສາຫະກຳໄມ້ພາຍໃນປະເທດ ແລະ ຫຼຸດຜ່ອນການນຳເຂົ້າໄມ້ປູກຈາກຕ່າງປະເທດ.

4.ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ:

ສືບຕໍ່ພັດທະນາດ້ານພື້ນຖານໂຄງລ່າງຊົນນະບົດ, ປະກອບສ່ວນ ໃນວຽກຈັດສັນພູມລຳເນົາ ແລະ ອາຊີບໃຫ້ປະຊາຊົນ ທີ່ບໍ່ມີພູມລຳເນົາຄົງທີ່ ແລະ ອາຊີບໝັ້ນຄົງ, ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຕ່າງໆ ເຮັດໃຫ້ການເຄື່ອນຍ້າຍແບບບໍ່ຖືກຕ້ອງ ຂອງພົນລະເມືອງໃຫ້ຫຼຸດລົງ ໂດຍປະຕິບັດຕາມກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ ແລະ ດຳເນີນຕາມແຜນຍຸດທະສາດ ໄລຍະ 2021-2030 ແນໃສ່ເຮັດໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຮັບການຍົກລະດັບໃຫ້ດີຂຶ້ນເທື່ອລະກ້າວ, ສາມາດເຂົ້າເຖິງການບໍລິ ການສາທາລະນະ, ມີລາຍຮັບເພີ່ມຂຶ້ນ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ ເທື່ອລະກ້າວ. ໂດຍສູ້ຊົນສ້າງຄອບຄົວພົ້ນທຸກໃຫ້ໄດ້ 204.360 ຄອບຄົວໃນທົ່ວປະເທດ (ເພີ່ມຂຶ້ນຈາກ 964.149 ຄອບຄົວມາເປັນ 1.168.509 ຄອບຄົວ) ສ້າງບ້ານພົ້ນທຸກໃຫ້ໄດ້ 3.104 ບ້ານ ໃນທົ່ວປະເທດ (ເພີ່ມຂຶ້ນ 4.792 ບ້ານມາເປັນ 7.896 ບ້ານ, ສ້າງເມືອງພົ້ນທຸກ ໃຫ້ໄດ້ 69 ເມືອງ ໃນທົ່ວປະເທດ (ເພີ່ມຂຶ້ນຈາກ 53 ເມືອງ ມາເປັນ 122 ເມືອງ) ສູ້ຊົນສ້າງຄອບຕົວພັດທະນາ ໃຫ້ໄດ້ 245.754 ຄອບຄົວ ໃນທົ່ວປະເທດ (ເພີ່ມຂຶ້ນຈາກ 736.996 ຄອບຄົວ ມາເປັນ 982.750 ຄອບຄົວ). ສ້າງບ້ານພັດທະນາ ໃຫ້ໄດ້ 4.420 ບ້ານ (ຈາກ 747 ບ້ານມາເປັນ 5.167 ບ້ານ) ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ໃນເຂດຈຸດສຸມ ໃຫ້ໄດ້ ຈຳນວນ 10 ບ້ານ ຈັດສັນພູມລຳເນົາຄົງທີ່ ແລະ ອາ ຊີບທີ່ໝັ້ນຄົງໃຫ້ປະຊາຊົນ ຢູ່ 25 ຈຸດສຸມ, ສ້າງ ແລະ ປັບປຸງ ກຸ່ມການຜະລິດໃຫ້ໄດ້ 4.420 ກຸ່ມ, ໃນນັ້ນ ໃຫ້ເປັນຕົວແບບ 250 ກຸ່ມ, ສ້າງສະຫະກອນ ແລະ ບໍລິການ ກະສິກຳ ແລະ ປ່າໄມ້ ໃຫ້ໄດ້ 18 ຫົວໜ່ວຍ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;